ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສຳນັກງານນາຍົກລັດຖະມົນຕີ
ກອງທຶນປົກປັກຮັກສາສິ່ງແວດລ້ອມ

ເລກທີ 01 / ສນຍ.ກປສ-ປທ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2007

# ຂໍ້ຕົກລົງ

## ວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຊີ້ນຳ ໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ

- ອີງຕາມ ດຳລັດ ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ເລກທີ 146/ນຍ, ລົງວັນທີ 6 ມິຖຸນາ 2005;
- ອີງຕາມ ສັນຍາຊ່ວຍເຫຼືອລ້າສຳລັບໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ ທີ່ເຊັນກັນລະຫວ່າງ ລັດຖະບານ ສປປລາວ ກັບທະນາຄານໂລກ ຄັ້ງວັນທີ 15 ສິງຫາ 2005;
- ອີງຕາມ ສັນຍາໃຫ້ທຶນຊ່ວຍເຫຼືອລ້າຕໍ່ ລະຫວ່າງ ກະຊວງການເງິນ ແລະ ກອງທຶນປົກປັກຮັກສາສິ່ງແວດລ້ອມ 07 ເມສາ 2006;
- ອີງຕາມ ຂໍ້ຕົກລົງ ຂອງທ່ານຮອງນາຍົກລັດຖະມົນຕີ, ປະທານສະພາບໍລິຫານກອງທຶນປົກປັກຮັກສາ ສິ່ງແວດລ້ອມ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳໂຄງການສິ່ງແວດລ້ອມແລະສັງຄົມ ຢູ່ ສປປ ລາວ ເລກທີ 04/ສນຍ.ກປສ, ລົງວັນທີ 13 ມັງກອນ 2006
- ອີງຕາມ ການຕົກລົງຂອງກອງປະຊຸມສະໄໝວິສາມັນຄັ້ງທີ II ຂອງສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ ໃນວັນທີ 6/2/2007;

ຮອງນາຍົກລັດຖະມົນຕີ, ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ ຕົກລົງ

## ໝວດທີ I. ບົດບັນຍັດທົ່ວໄປ

### *ມາດຕາ 1. ຈຸດປະສົງຂອງຂໍ້ຕົກລົງ*

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຊີ້ນຳ ໂຄງການສິ່ງແວດລ້ອມແລະສັງຄົມຢູ່ ສປປລາວ ຊຶ່ງມາຈາກກອງທຶນຍ່ອຍ **ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ** *(ຕໍ່ໄປເອີ້ນວ່າ ຄະນະກຳມະການຊີ້ນຳໂຄງການ)* ແນໃສ່ຮັບ

ປະກັນວ່າທຶນຮອນຈາກກອງທຶນຍ່ອຍ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ຖືກນຳໃຊ້ຕາມຈຸດປະສົງຂອງມັນ ແລະ ຂອງຍຸດທະສາດສິ່ງແວດລ້ອມແຫ່ງຊາດ.

*ມາດຕາ 2. ພາລະບົດບາດ*

ຄະນະກຳມະການຊີ້ນຳໂຄງການ ທີ່ເປັນໜຶ່ງໃນບັນດາເລນາທິການ ຂອງສະພາບໍລິຫານ ກປສ ໄດ້ຮັບການແຕ່ງຕັ້ງຂຶ້ນ ໂດຍ ສະພາບໍລິຫານ ກປສ ເພື່ອຈັດຕັ້ງປະຕິບັດວຽກງານສະເພາະໃດໜຶ່ງຂອງ ກປສ ເປັນຕົ້ນໃຫ້ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ໂຄງການສິ່ງແວດລ້ອມແລະສັງຄົມ ໃຫ້ສອດຄ່ອງກັບສັນຍາກ່ຽວກັບການຊ່ວຍເຫຼືອລ້າ ໃຫ້ແກ່ໂຄງການສິ່ງແວດລ້ອມແລະສັງຄົມ ລະຫວ່າງ ລັດຖະບານ ສປປລາວ ແລະ ທະນາຄານໂລກ.

## ໝວດທີ II. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຊີ້ນຳໂຄງການ

*ມາດຕາ 3. ສິດ ແລະ ໜ້າທີ່ຂອງຄະນະກຳມະການຊີ້ນຳໂຄງການ*

ຄະນະກຳມະການຊີ້ນຳໂຄງການ ມີໜ້າທີ່ໃຫ້ການຊີ້ນຳທາງດ້ານນະໂຍບາຍ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ໂຄງການສິ່ງແວດລ້ອມແລະສັງຄົມ ຂອງ ກປສ. ຄວາມຮັບຜິດຊອບຕົ້ນຕໍຂອງຄະນະກຳມະການຊີ້ນຳໂຄງການດັ່ງກ່າວ ມີດັ່ງນີ້:

3.1 ໃຫ້ທິດຊີ້ນຳທາງດ້ານນະໂຍບາຍ ໃນການສະໜອງທຶນຮອນ ໃຫ້ແກ່ໂຄງການຍ່ອຍທີ່ສະເໜີຂໍທຶນຊ່ວຍເຫຼືອລ້າ ຈາກໂຄງການສິ່ງແວດລ້ອມແລະສັງຄົມ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດໂຄງການຍ່ອຍດັ່ງກ່າວ ເພື່ອໃຫ້ບັນລຸໄດ້ຕາມເປົ້າໝາຍ, ຕົວຊີ້ວັດແລະນະໂຍບາຍປ້ອງກັນສິ່ງແວດລ້ອມແລະສັງຄົມ ສຳລັບໂຄງການດັ່ງກ່າວ;

3.2 ພິຈາລະນາ ແລະ ຜ່ານບົດແນະນຳເຕັກນິກ, ບັນທັດຖານ, ຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ບົດສະເໜີຂໍທຶນ ທີ່ໜ່ວຍງານຄຸ້ມຄອງໂຄງການສິ່ງແວດລ້ອມແລະສັງຄົມ ໄດ້ຮ່າງ ແລະ ປັບປຸງມາ;

3.3 ພິຈາລະນາ ແລະ ຜ່ານ ແຜນການເຄື່ອນໄຫວແລະແຜນງົບປະມານ ປະຈຳແຕ່ລະປີ ຂອງໂຄງການສິ່ງແວດລ້ອມແລະສັງຄົມ;

3.4 ພິຈາລະນາແລະຜ່ານ ບົດສະເໜີໂຄງການຍ່ອຍ ທີ່ຂໍການສະໜັບສະໜູນທຶນຊ່ວຍເຫຼືອລ້າຂະໜາດໃຫຍ່ (ລື່ນ 10.000 ໂດລາສະຫະລັດ) ເພື່ອສະເໜີສະພາບໍລິຫານ ກປສ ພິຈາລະນາຮັບຮອງເອົາ;

3.5. ຕິດຕາມເບິ່ງການອະນຸມັດ ແລະ ໃຫ້ຄຳຄິດຄຳເຫັນໃນການຄັດເລືອກໂຄງການຍ່ອຍຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາສະຫະລັດ);

3.6 ພິຈາລະນາຜ່ານ ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການສິ່ງແວດລ້ອມແລະສັງຄົມ; ແລະ

3.7 ສະຫຼຸບສັງລວມ, ຕີລາຄາ ວຽກງານຂອງຕົນແລະວຽກງານຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມ ແລະສັງຄົມ ໃຫ້ສະພາບໍລິຫານ ກປສ ຊາບຢ່າງເປັນປົກກະຕິ.

## ໝວດທີ III. ໂຄງປະກອບ ຂອງຄະນະກໍາມະການຊີ້ນໍາໂຄງການ

### *ມາດຕາ 4. ໂຄງປະກອບຄະນະກໍາມະການຊີ້ນໍາໂຄງການ*

4.1 ຄະນະກໍາມະການຊີ້ນໍາໂຄງການ ປະກອບດ້ວຍ:

| | |
|---|---|
| 1. ຮອງຫົວໜ້າ ອົງການ ວິທະຍາສາດ ເຕັກໂນໂລຊີແລະສິ່ງແວດລ້ອມ | ເປັນປະທານ |
| 2. ຮອງຫົວໜ້າຫ້ອງການ, ກະຊວງພະລັງງານແລະບໍ່ແຮ່ | ເປັນຮອງປະທານ |
| 3. ຮອງຫົວໜ້າຫ້ອງການ, ກະຊວງກະສິກໍາ ແລະ ປ່າໄມ້ | ເປັນຮອງປະທານ |
| 4. ຫົວໜ້າຫ້ອງວ່າການ ແຂວງບໍລິຄໍາໄຊ | ເປັນກໍາມະການ |
| 5. ຫົວໜ້າຫ້ອງວ່າການ ແຂວງຄໍາມ່ວນ | ເປັນກໍາມະການ |
| 6. ຫົວໜ້າຫ້ອງວ່າການ ແຂວງສະຫວັນນະເຂດ | ເປັນກໍາມະການ |
| 7. ຜູ້ຕາງໜ້າ ສູນກາງແນວລາວສ້າງຊາດ | ເປັນກໍາມະການ |
| 8. ຜູ້ຕາງໜ້າ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ | ເປັນກໍາມະການ |
| 9. ຜູ້ຕາງໜ້າ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ | ເປັນກໍາມະການ |
| 10. ຜູ້ຕາງໜ້າ ກະຊວງການເງິນ | ເປັນກໍາມະການ |
| 11. ຜູ້ຕາງໜ້າ ຄະນະກໍາມະການແຜນການ ແລະ ການລົງທຶນ | ເປັນກໍາມະການ |
| 12. ຜູ້ຕາງໜ້າ ກະຊວງການຕ່າງປະເທດ | ເປັນກໍາມະການ |
| 13. ຜູ້ຕາງໜ້າ ກະຊວງສຶກສາ | ເປັນກໍາມະການ |
| 14. ຜູ້ຕາງໜ້າ ກະຊວງຖະແຫຼງຂ່າວແລະວັດທະນະທໍາ | ເປັນກໍາມະການ |

4.2 ຄະນະປະຈໍາ ປະກອບດ້ວຍ ສະມາຊິກຄະນະຊີ້ນໍາໂຄງການ ດັ່ງນີ້:

| | |
|---|---|
| 1. ຮອງຫົວໜ້າ ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ | ເປັນຫົວໜ້າ |
| 2. ຮອງຫົວໜ້າຫ້ອງການ, ກະຊວງພະລັງງານແລະບໍ່ແຮ່ | ເປັນສະມາຊິກ |
| 3. ຮອງຫົວໜ້າຫ້ອງການ, ກະຊວງກະສິກໍາ ແລະ ປ່າໄມ້ | ເປັນສະມາຊິກ |
| 4. ຜູ້ຕາງໜ້າ ກະຊວງສຶກສາ | ເປັນສະມາຊິກ |
| 5. ຜູ້ຕາງໜ້າ ກະຊວງຖະແຫຼງຂ່າວ ແລະ ວັດທະນະທໍາ | ເປັນສະມາຊິກ |

*ມາດຕາ 5. ສິດ ແລະ ໜ້າທີ່ ຂອງປະທານ ຄະນະກຳມະການຊີ້ນຳໂຄງການ*

ປະທານຄະນະກຳມະການຊີ້ນຳໂຄງການ ມີສິດ ແລະ ໜ້າທີ່ລະອຽດດັ່ງນີ້:

5.1 ເປັນຕົວແທນໃຫ້ຄະນະກຳມະການຊີ້ນຳໂຄງການ ໃຫ້ທິດຊີ້ນຳ ແລະ ຕິດຕາມກວດກາການສະໜອງທຶນໃຫ້ແກ່ການຈັດຕັ້ງປະຕິບັດໂຄງການຍ່ອຍ;

5.2 ລົງນາມໃນທຸກເອກະສານ ຂອງຄະນະກຳມະການຊີ້ນຳໂຄງການ;

5.3 ເປັນປະທານກອງປະຊຸມ ຂອງຄະນະກຳມະການຊີ້ນຳໂຄງການ ແລະ ຄະນະປະຈຳ ຂອງຄະນະກຳມະການຊີ້ນຳໂຄງການ; ແລະ

5.4 ມອບສິດໃຫ້ແກ່ຮອງປະທານ ເພື່ອປະຕິບັດໜ້າທີ່ແທນຕົນ ໃນເວລາຕິດຂັດວຽກງານອື່ນ.

*ມາດຕາ 6. ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະກຳມະການຊີ້ນຳໂຄງການ*

ຮອງປະທານຄະນະກຳມະການຊີ້ນຳໂຄງການ ມີສິດ ແລະ ໜ້າທີ່ລະອຽດດັ່ງນີ້:

6.1 ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ທີ່ຖືກແຕ່ງຕັ້ງຫຼືຖືກມອບໝາຍ ຈາກປະທານ;

6.2 ຊ່ວຍປະທານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງຄະນະກຳມະການຊີ້ນຳໂຄງການ; ແລະ

6.3 ຮັກສາການແທນປະທານຕາມການມອບໝາຍ ເມື່ອປະທານບໍ່ຢູ່ ຫຼື ຕິດຂັດ.

*ມາດຕາ 7. ສິດ ແລະ ໜ້າທີ່ຮັບຜິດຊອບຂອງສະມາຊິກຄະນະກຳມະການຊີ້ນຳໂຄງການ*

ສິດ ແລະ ໜ້າທີ່ຮັບຜິດຊອບຂອງສະມາຊິກ ຄະນະກຳມະການຊີ້ນຳໂຄງການ ມີ:

7.1 ເຂົ້າຮ່ວມ ແລະ ປະກອບຄຳຄິດຄຳເຫັນໃນກອງປະຊຸມ ຂອງຄະນະກຳມະການຊີ້ນຳໂຄງການ;

7.2. ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງກອງປະຊຸມຄະນະກຳມະການ ຊີ້ນຳໂຄງການ ຢູ່ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ ແລະ ລາຍງານຜົນທີ່ໄດ້ຮັບຈາກວຽກງານດັ່ງກ່າວ;

7.3 ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ແຜນການເຄື່ອນໄຫວ, ງົບປະມານ ແລະ ບັນຫາອື່ນໆ ທີ່ຍົກຂຶ້ນຢູ່ໃນກອງປະຊຸມຂອງຄະນະກຳມະການຊີ້ນຳໂຄງການ;

7.4 ແຕ່ງຕັ້ງຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕົນ ໃນເມື່ອບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້; ແລະ

7.5 ສະເໜີປະທານ ຈັດກອງປະຊຸມສະໄໝວິສາມັນ ຂອງຄະນະກຳມະການຊີ້ນຳໂຄງການ, ຖ້າເຫັນວ່າມີຄວາມຈຳເປັນ.

## *ມາດຕາ 8. ສິດ ແລະ ໜ້າທີ່ ຂອງຄະນະປະຈຳ*

ຄະນະປະຈຳ ມີສິດ ແລະ ໜ້າທີ່ດັ່ງນີ້:

8.1 ເປັນຕົວແທນໃຫ້ແກ່ ຄະນະກຳມະການຊີ້ນຳໂຄງການ ໃນລະຫວ່າງ ສອງກອງປະຊຸມ;

8.2 ພິຈາລະນາບັນຫາທີ່ຮີບດ່ວນ ທາງດ້ານນະໂຍບາຍ ແລະ ວຽກງານໂຄງການ ໃນໄລຍະ ສອງກອງປະຊຸມ ຕາມການສະເໜີຂອງຫ້ອງການ ກປສ; ແລະ

8.3 ສະເໜີປະທານ ຈັດກອງປະຊຸມຂອງຄະນະປະຈຳ, ຖ້າເຫັນວ່າມີຄວາມຈຳເປັນ.

## *ມາດຕາ 9: ກອງເລຂາຂອງຄະນະກຳມະການຊີ້ນຳໂຄງການ*

ຜູ້ອຳນວຍການຫ້ອງການບໍລິຫານ ກປສ ແລະ ຜູ້ຈັດການ ຄສລ, ນອກຈາກ ເຮັດໜ້າທີ່ຫົວໜ້າ ແລະ ຮອງຫົວໜ້າກອງເລຂາ ໃຫ້ສະພາບໍລິຫານ ກປສ ແລ້ວ ຍັງຕ້ອງເຮັດໃຫ້ຄະນະກຳມະການຊີ້ນຳ ໂຄງການ ຕາມອັນດັບ ໂດຍມີໜ່ວຍງານຄຸ້ມຄອງໂຄງການສິ່ງແວດລ້ອມແລະສັງຄົມ ເປັນຜູ້ຊ່ວຍ. ກອງເລຂາ ມີໜ້າທີ່ລະອຽດດັ່ງນີ້:

9.1 ກະກຽມ ແລະ ຈັດກອງປະຊຸມສາມັນ ຂອງຄະນະກຳມະການຊີ້ນຳໂຄງການ ໃນທຸກໆ 3 ເດືອນ ເປັນຕົ້ນ ສົ່ງບັດເຊີນ, ລາຍການປະຊຸມ ແລະ ເອກະສານ ທີ່ສະຫຼຸບບັນຫາ ແລະ ມະຕິທີ່ຕ້ອງການ ຢ່າງຊັດເຈນ ເພື່ອສົ່ງໃຫ້ປະທານ, ຮອງປະທານ ແລະ ສະມາຊິກ ພິຈາລະນາ ຢ່າງໜ້ອຍ 10 ວັນ ກ່ອນມື້ຈັດກອງປະຊຸມສາມັນ;

9.2 ກະກຽມ ແລະ ຈັດກອງປະຊຸມວິສາມັນ ຂອງຄະນະກຳມະການຊີ້ນຳໂຄງການ ແລະ ກອງປະຊຸມຄະນະປະຈຳ ຕາມການຊີ້ນຳຂອງປະທານຄະນະກຳມະການຊີ້ນຳໂຄງການ. ໜ້າທີ່ດັ່ງກ່າວມີ: ບັດເຊີນ, ລາຍການປະຊຸມ ແລະ ເອກະສານທີ່ສະຫຼຸບ ບັນຫາທີ່ຕ້ອງການ ນຳສະເໜີ ຢ່າງຊັດເຈນ ເພື່ອສົ່ງໃຫ້ປະທານ, ຮອງປະທານ ແລະ ສະມາຊິກ ພິຈາລະນາ ຢ່າງໜ້ອຍ 3 ວັນ ກ່ອນມື້ຈັດກອງປະຊຸມເຫຼົ່ານີ້;

9.3 ເຊີນພະນັກງານຂອງລັດ, ຜູ້ຊ່ຽວຊານ, ຜູ້ຕາງໜ້າຂອງອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມຄະນະກຳມະການຊີ້ນຳໂຄງການ ໃນນາມຜູ້ສັງເກດການ ຕາມທີ່ປະທານ ຄະນະກຳມະການຊີ້ນຳໂຄງການ ໄດ້ອະນຸຍາດ;

9.4 ເອົາຂໍ້ສະເໜີຂອງສະມາຊິກຂອງຄະນະກຳມະການຊີ້ນຳໂຄງການ ສະເໜີຕໍ່ປະທານຄະນະກຳມະການຊີ້ນຳໂຄງການ ທີ່ຈະໄດ້ກວດ, ເລືອກ ແລະ ຕົກລົງ ເອົາເຂົ້າໃນວາລະຂອງ ກອງປະຊຸມສະໄໝສາມັນທີ່ຈະມາເຖິງ;

9.5 ເຮັດບົດບັນທຶກ ແລະ ມະຕິຕົກລົງ ແລະ ເອກະສານ ຂອງແຕ່ລະກອງປະຊຸມ ຄະນະກຳມະການຊີ້ນຳໂຄງການແລະຄະນະປະຈຳ, ລວມທັງຄຳເຫັນແລະລາຍຊື່ຂອງສະມາຊິກ ແຕ່ລະທ່ານທີ່ເຂົ້າຮ່ວມກອງປະຊຸມ ແລະ ສົ່ງບົດບັນທຶກ ແລະ ມະຕິຕົກລົງດັ່ງກ່າວ ໃຫ້ ສະມາຊິກ ຄະນະກຳມະການຊີ້ນຳໂຄງການແຕ່ລະທ່ານ ຢ່າງຊ້າ 7ວັນ ຫຼັງຈາກກອງປະຊຸມ ສຳເລັດ;

9.6 ກະກຽມ ແລະ ສົ່ງບົດລາຍງານຄວາມຄືບໜ້າ ຂອງໂຄງການສິ່ງແວດລ້ອມແລະສັງຄົມ ປະຈຳງວດ ແລະ ປະຈຳປີ; ແລະ

9.7 ແຈ້ງທຸກການປ່ຽນແປງຂອງສະມາຊິກຄະນະກຳມະການຊີ້ນຳໂຄງການ ໃຫ້ສະມາຊິກທຸກທ່ານ ຮັບຊາບ.

## ໝວດທີ IV. ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຊີ້ນຳໂຄງການ

### *ມາດຕາ 10. ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຊີ້ນຳໂຄງການ*

10.1 ຄະນະກຳມະການຊີ້ນຳໂຄງການ ຕ້ອງດຳເນີນວຽກງານ ຕາມລະບອບກອງປະຊຸມ, ຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ ແລະ ມີການແບ່ງໜ້າທີ່ຮັບຜິດຊອບລະອຽດ. ມະຕິຕົກລົງຂອງຄະນະກຳມະການຊີ້ນຳໂຄງການ ແມ່ນຖືກຮັບຮອງໂດຍສຽງສ່ວນຫຼາຍຂອງສະມາຊິກ ທີ່ໄດ້ເຂົ້າຮ່ວມກອງປະຊຸມ;

10.2 ຄະນະກຳມະການຊີ້ນຳໂຄງການ ຈະຈັດກອງປະຊຸມຂຶ້ນ ຢ່າງສະໝ່ຳສະເໝີທຸກໆ 3 ເດືອນ ເຊິ່ງວັນເວລາ ແລະ ສະຖານທີ່ຂອງກອງປະຊຸມດັ່ງກ່າວ ຈະແມ່ນປະທານຂອງຄະນະກຳມະການຊີ້ນຳໂຄງການ ເປັນຜູ້ກຳນົດ;

10.3 ກອງປະຊຸມວິສາມັນ ຂອງຄະນະກຳມະການຊີ້ນຳໂຄງການ ແລະ ກອງປະຊຸມຄະນະປະຈຳ ອາດຈະຈັດຂຶ້ນຕາມການຕົກລົງ ຂອງປະທານຄະນະກຳມະການຊີ້ນຳໂຄງການ ຊຶ່ງມາຈາກການສະເໜີ ຂອງສະມາຊິກຜູ້ໃດຜູ້ໜຶ່ງ ຫຼື ຫົວໜ້າກອງເລຂາ ຖ້າເຫັນວ່າມີຄວາມຈຳເປັນ;

10.4 ຂໍ້ສະເໜີຂອງສະມາຊິກຂອງຄະນະກຳມະການຊີ້ນຳໂຄງການ ທີ່ຈະເອົາເຂົ້າໃນວາລະກອງປະຊຸມສຳລັບກອງປະຊຸມສະໄໝສາມັນທີ່ຈະມາເຖິງ ຕ້ອງໄດ້ສົ່ງໃຫ້ກອງເລຂາຢ່າງໜ້ອຍ 5 ວັນກ່ອນເປີດກອງປະຊຸມດັ່ງກ່າວ;

10.5 ປະທານຄະນະກຳມະການຊີ້ນຳໂຄງການ ອະນຸຍາດໃຫ້ກອງເລຂາ ເຊື້ອເຊີນພະນັກງານຂອງລັດ, ຜູ້ຊ່ຽວຊານ, ຜູ້ຕາງໜ້າຂອງອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມ ໃນນາມຜູ້ສັງເກດການ;

10.6 ກອງປະຊຸມຄະນະກຳມະການຊີ້ນຳໂຄງການທຸກຄັ້ງ, ຕ້ອງມີສະມາຊິກ ລວມທັງຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກ ເພື່ອປະກອບເປັນອົງປະຊຸມໄດ້;

10.7 ເມື່ອສະມາຊິກຜູ້ໃດໜຶ່ງ ຫາກບໍ່ຢູ່, ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້, ຫຼື ບໍ່ສາມາດປະຕິບັດ ໜ້າທີ່ຂອງຕົນໄດ້ໃນນາມເປັນສະມາຊິກຂອງ ຄະນະກຳມະການຊີ້ນຳໂຄງການ, ສະມາຊິກດັ່ງກ່າວ ຕ້ອງແຈ້ງໃຫ້ກອງເລຂາຄະນະກຳມະການຊີ້ນຳໂຄງການ ກ່ຽວກັບເຫດການດັ່ງກ່າວນັ້ນ ແລະ ອາດແຕ່ງຕັ້ງຜູ້ໃໝ່ມາເຮັດໜ້າທີ່ແທນໄດ້ ຖ້າມີການມອບສິດເປັນລາຍລັກອັກສອນ;

10.8 ການຕົກລົງຂອງຄະນະກຳມະການຊີ້ນຳໂຄງການ ຫຼື ຄະນະປະຈຳ ແມ່ນອີງໃສ່ສຽງສ່ວນຫຼາຍ ຂອງສະມາຊິກ ທີ່ເຂົ້າຮ່ວມກອງປະຊຸມ. ຖ້າບໍ່ສາມາດຕົກລົງບັນຫາຮ່ວມກັນໄດ້ ຕ້ອງໄດ້ມີການລົງຄະແນນສຽງແບບປິດລັບ. ໃນກໍລະນີມີສຽງເທົ່າກັນ, ໃຫ້ຖືເອົາສຽງຂອງປະທານເປັນອັນຕັດສິນ;

10.9 ຄະນະກຳມະການຊີ້ນຳໂຄງການ ບໍ່ສາມາດເປີດກອງປະຊຸມໄດ້ ຖ້າອົງປະຊຸມບໍ່ຄົບ ຫຼັງກຳນົດໝາຍ ຂອງກອງປະຊຸມ 30 ນາທີ, ກອງປະຊຸມດັ່ງກ່າວຈະຖືກໂຈະ ແລະ ປະທານ ຈະແຈ້ງຕໍ່ສະມາຊິກທີ່ມາປະຊຸມ ແລະ ກອງເລຂາໃຫ້ຮັບຊາບ ກ່ຽວກັບເວລາ ແລະສະຖານທີ່ຂອງກອງປະຊຸມໃນມື້ຕໍ່ໄປ. ສຳລັບລາຍການ ແລະ ເນື້ອໃນຂອງກອງປະຊຸມນັ້ນ ແມ່ນຈະໄດ້ດຳເນີນຕາມແຜນ ທີ່ໄດ້ວາງໄວ້ໃນເບື້ອງຕົ້ນ;

10.10 ກອງປະຊຸມແຕ່ລະຄັ້ງ ຕ້ອງມີບົດບັນທຶກ ຂອງກອງປະຊຸມ ແລະ ຕ້ອງມີລາຍເຊັນຂອງຫົວໜ້າກອງເລຂາ ແລະ ປະທານກອງປະຊຸມ ຫຼື ຜູ້ທີ່ຖືກມອບໝາຍຈາກປະທານໃຫ້ເຊັນ. ບົດບັນທຶກດັ່ງກ່າວ ຈະໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນຂອງຄະນະກຳມະການຊີ້ນຳໂຄງການ ຄັ້ງຕໍ່ມາ ແລະ ສົ່ງໃຫ້ສະມາຊິກ ຄະນະກຳມະການຊີ້ນຳໂຄງການ ພ້ອມທັງກຸ່ມປະຊາຊົນທີ່ມີສ່ວນກ່ຽວຂ້ອງ. ສຳລັບກອງປະຊຸມຄະນະປະຈຳ ຈະຮັບເອົາບົດສະຫຼຸບໃນກອງປະຊຸມຕົນເອງ.

## ໝວດທີ V. ບັນຍັດສຸດທ້າຍ

*ມາດຕາ 11. ການຈັດຕັ້ງປະຕິບັດຂໍ້ຕົກລົງ*

ຄະນະຊີ້ນຳໂຄງການ, ຫ້ອງການບໍລິຫານ ກປສ, ໜ່ວຍງານຄຸ້ມຄອງໂຄງການ, ບັນດາອົງການຈັດຕັ້ງຂອງລັດ ແລະ ອຳນາດການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ໃຫ້ມີປະສິດທິຜົນ ຕາມສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ.

*ມາດຕາ 12. ຜົນສັກສິດ*

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງກ່ຽວກັບວຽກງານດັ່ງກ່າວໃນໄລຍະທີ່ຜ່ານມານີ້ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນໃຫ້ຍົກເລີກ.

ຮອງນາຍົກລັດຖະມົນຕີ,

ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ

ອາຊາງ ລາວລີ